ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 251/ຈທວ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2017

**ເຖິງ:** ວິສາຫະກິດທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ, ບັນດາພາກສ່ວນຕ່າງໆ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ແຈ້ງໂຈະການເຄື່ອນໄຫວທຸລະກິດ ຊົ່ວຄາວ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1142/ຫສນຍ.ກຄສ; ລົງວັນທີ 2/8/2017;
- ອີງຕາມ ໜັງສືສະເໜີຂໍຂໍ້ມູນຈາກທະນາຄານແຫ່ງ ສປປ ລາວ ສະບັບເລກທີ 58/ກຄສງ, ລົງວັນທີ 31/3/2017;
- ອີງຕາມແຈ້ງການການກວດກາຕິດຕາມ ການມີຕົວຕົນຂອງວິສາຫະກິດພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ ສະບັບເລກທີ 2121/ອຄ.ທຄວ, ລົງວັນທີ 14/10/2015;
- ອີງຕາມ ບົດລາຍງານການລົງກວດກາພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ສະບັບເລກທີ 1411/ອຄນວ.ຄທວ, ລົງວັນທີ 1 ມິຖຸນາ 2017.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) ແຈ້ງມາຍັງບັນດາພາກສ່ວນຕ່າງໆ ໄດ້ຊາບວ່າ:

1. ໂຈະການເຄື່ອນໄຫວທຸລະກິດ ຊົ່ວຄາວ ໃນທຸກປະເພດທຸລະກິດທີ່ໄດ້ບົ່ງໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ ຂອງບັນດາບໍລິສັດ ລຸ່ມນີ້:

- ບໍລິສັດ ລາວ ອີຊີ ອິນເວັສເມັນ ແອັດວາຍເຊີ ຈຳກັດ ທະບຽນວິສາຫະກິດ ສະບັບເລກທີ 102/ຈທວ, ລົງວັນ ທີ 11/2/2015;
- ບໍລິສັດ ລາວຄຳ ທີ່ປຶກສາດ້ານການລົງທຶນ ຈຳກັດ ທະບຽນວິສາຫະກິດ ສະບັບເລກທີ 206/ຈທວ, ລົງວັນທີ 14 ມີນາ 2016;
- ບໍລິສັດ ເອັກແຊວເອເຊຍ ລາວ ຈຳກັດ ທະບຽນວິສາຫະກິດ ສະບັບເລກທີ 0502/ຈທວ, ລົງວັນທີ 08/06/2017.

2. ຜົນຂອງການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຕາມຂໍ້ 1 ເທິງນີ້ ມີດັ່ງນີ້:

2.1 ບໍ່ສາມາດເຄື່ອນໄຫວທຸລະກິດໄດ້, ໃນກໍລະນີລະເມີດ ຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ ຕາມມາດຕາ 212 ຂອງ ກົດໝາຍວ່າດ້ວຍວິສາຫະກິດ;

2.2 ໃຫ້ເຂົ້າມາຊີ້ແຈງ ສະພາບການເຄື່ອນໄຫວທຸລະກິດຂອງຕົນ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອຊາບ;



Scanned by CamScanner

2.4 ໃຫ້ນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເກັບຮັກສາໄວ້ຊົ່ວຄາວ. ບຸກຄົນ ຫຼື ນິຕິບຸກຄົນໃດ ຫາກນຳເອົາໃບທະບຽນວິສາຫະກິດຂອງບັນດາບໍລິສັດດັ່ງກ່າວໄປນຳໃຊ້ ນອກຈາກຈະຖືກປະຕິບັດ ມາດຕະການຕາມ ຂໍ້ 2.1 ເທິງນີ້ ແລ້ວ ຍັງຕ້ອງຮັບຜິດຊອບທັງໝົດຕໍ່ໜ້າກົດໝາຍ ຈາກຜົນເສຍຫາຍທີ່ຕົນສ້າງຂຶ້ນ.

3. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວນີ້ ມີຜົນເລີ່ມແຕ່ ວັນທີ 28 ສິງຫາ 2017 ເຖິງ ວັນທີ 28 ຕຸລາ 2017. ໃນກໍລະນີ ເກີນກຳນົດເວລາດັ່ງກ່າວ ຫາກບໍ່ດຳເນີນການໃດໆ ຫຼື ດຳເນີນການ ແຕ່ບໍ່ມີເຫດຜົນພຽງພໍ ຈະຖືກດຳເນີນມາດຕະການ ສັ່ງໂຈະການເຄື່ອນໄຫວທຸລະກິດຖາວອນ ຫຼື ຍຸບເລີກ ຕາມຂັ້ນຕອນທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ-2013;

4. ສຳລັບ ບໍລິສັດ ເວັນເຈີ ເນັດເວີກ ຂາເຂົ້າ-ຂາອອກ ຈຳກັດ ແລະ ບໍລິສັດ ທີ່ປຶກສາການເງິນພັດທະນາລາວ ຈຳກັດ ທີ່ໄດ້ຂຶ້ນທະບຽນວິສາຫະກິດຢູ່ ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກດັ່ງກ່າວ ອອກຄຳສັ່ງແຈ້ງໂຈະການເຄື່ອນໄຫວທຸລະກິດ ຊົ່ວຄາວ ພາຍໃນກຳນົດ 2 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄຳສັ່ງແຈ້ງໂຈະສະບັບນີ້ ເປັນຕົ້ນໄປ ແລະ ໃຫ້ສົ່ງຄຳສັ່ງແຈ້ງໂຈະດັ່ງກ່າວ ໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດຊາບ ໃນທັນທີ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມຢ່າງເຂັ້ມງວດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ຫຸມແພງ ຄຳພາສິດ

Houmpheng KHAMPHASITH

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ;
- ທະນາຄານແຫ່ງ ສປປ ລາວ 1 ສະບັບ;
- ກົມສວຍສາອາກອນ 1 ສະບັບ;
- ບໍລິສັດທີ່ກ່ຽວຂ້ອງ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 1 ສະບັບ;
- ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສຳເນົາ 1 ສະບັບ.



Scanned by CamScanner